ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ 237 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 18. 12. 2008

# ລັດຖະດຳລັດ
# ຂອງປະທານປະເທດ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການສືບທອດມູນມໍລະດົກ

( ສະບັບປັບປຸງ )

~~~~~~~~~~~~

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້ 1 ກ່ຽວກັບການປະກາດໃຊ້ລັດຖະທຳມະນູນ ແລະ ກົດໝາຍທີ່ສະພາແຫ່ງຊາດໄດ້ຕົກລົງຮັບຮອງເອົາແລ້ວ;
- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 222/ສພຊ, ລົງວັນທີ 8 ທັນວາ 2008 ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍການສືບທອດມູນມໍລະດົກ (ສະບັບປັບປຸງ);
- ອີງຕາມໜັງສືສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 38/ຄປຈ, ລົງວັນທີ 16 ທັນວາ 2008.

*ປະທານປະເທດ*

*ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ອອກລັດຖະດຳລັດ :*

*<u>ມາດຕາ 1</u>* : ປະກາດໃຊ້ກົດໝາຍວ່າດ້ວຍການສືບທອດມູນມໍລະດົກ (ສະບັບປັບປຸງ).

*<u>ມາດຕາ 2</u>* : ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ.

ຈູມມາລີ ໄຊຍະສອນ
~~~~~~~~~~~~

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສະພາແຫ່ງຊາດ** ເລກທີ 222 /ສພຊ

# ມະຕິຕົກລົງ
ຂອງ
ສະພາແຫ່ງຊາດ ແຫ່ງ
ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການຕົກລົງຮັບຮອງເອົາ
## ກົດໝາຍວ່າດ້ວຍ ການສືບທອດມູນມໍຣະດົກ (ສະບັບປັບປຸງ)

---

- ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 2 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ.

ພາຍຫລັງທີ່ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ VI ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ການສືບທອດມູນມໍຣະດົກ (ສະບັບປັບປຸງ) ໃນວາລະປະຊຸມຕອນເຊົ້າຂອງວັນທີ 8 ທັນວາ 2008,

## ກອງປະຊຸມໄດ້ຕົກລົງ:

ມາດຕາ 1. ຮັບຮອງເອົາກົດໝາຍວ່າດ້ວຍ ການສືບທອດມູນມໍຣະດົກ (ສະບັບປັບປຸງ) ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2. ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫລວງວຽງຈັນ, ວັນທີ 8 ທັນວາ 2008
ປະທານສະພາແຫ່ງຊາດ

ທອງສິງ ທຳມະວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ສະພາແຫ່ງຊາດ

ເລກທີ 02 / ສພຊ
ນະຄອນຫຼວງວຽງຈັນ, ວັນທີ 8 ທັນວາ 2008

# ກົດໝາຍ
# ວ່າດ້ວຍການສືບທອດມູນມໍລະດົກ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1(ໃໝ່). ຈຸດປະສົງ**

ກົດໝາຍວ່າດ້ວຍການສືບທອດມູນມໍລະດົກ ກໍານົດຫລັກການ, ລະບຽບການ, ມາດຕະການ ກ່ຽວກັບການແບ່ງປັນ, ການສືບທອດ ແລະ ການຄຸ້ມຄອງມູນມໍລະດົກ ແນໃສ່ຮັບປະກັນຄວາມຖືກຕ້ອງ ແລະ ຍຸຕິທໍາຂອງການສືບທອດມູນມໍລະດົກ, ເຮັດໃຫ້ສິດ ແລະ ພັນທະຂອງເຈົ້າມູນມໍລະດົກ ແລະ ຜູ້ສືບທອດ ໄດ້ຮັບການປະຕິບັດຢ່າງແທ້ຈິງ ເພື່ອໃຫ້ສັງຄົມມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍ.

**ມາດຕາ 2. ການສືບທອດມູນມໍລະດົກ**

ການສືບທອດມູນມໍລະດົກ ແມ່ນ ການຕົກທອດຂອງຊັບສົມບັດ ທີ່ເປັນກໍາມະສິດຂອງຜູ້ເສຍຊີວິດ ລວມທັງສິດ ແລະ ພັນທະຂອງຜູ້ກ່ຽວໃຫ້ແກ່ຜູ້ສືບທອດມູນມໍລະດົກຕາມກົດໝາຍ ຫລື ຕາມພິໄນກໍາ.

**ມາດຕາ 3(ໃໝ່). ການອະທິບາຍຄໍາສັບ**

ຄໍາສັບຕ່າງໆ ທີ່ນໍາໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ມູນມໍລະດົກ ໝາຍເຖິງ ຊັບສົມບັດທຸກປະເພດທີ່ເປັນກໍາມະສິດຂອງຜູ້ເສຍຊີວິດ ລວມທັງສິດ ແລະ ພັນທະຂອງຜູ້ກ່ຽວ ເວັ້ນເສຍແຕ່ສິດ ແລະ ພັນທະຊຶ່ງກົດໝາຍ ຫລື ສັນຍາໄດ້ກໍານົດໄວ້ໃຫ້ຜູ້ເສຍຊີວິດ ຕ້ອງໄດ້ປະຕິບັດດ້ວຍຕົນເອງ ໃນເວລາທີ່ຜູ້ກ່ຽວຍັງມີຊີວິດຢູ່ນັ້ນ;
2. ຊັບເດີມ ໝາຍເຖິງ ຊັບສົມບັດທີ່ຜົວ ຫລື ເມຍໄດ້ມາກ່ອນການແຕ່ງດອງ ຫລື ຊັບສົມບັດທີ່ໄດ້ມາຈາກການສືບທອດມູນມໍລະດົກ ຫລື ຈາກການມອບ ຫລື ການຍົກຊັບໃຫ້

ຜົວ ຫລື ເມຍສະເພາະພາຍຫລັງການແຕ່ງດອງ ແລະ ຊັບສົມບັດຂອງຜົວ ຫລື ເມຍທີ່ຍັງຄົງຢູ່ ຫລື ປ່ຽນສະພາບໄປເປັນຊັບສິ່ງຂອງໃໝ່ແລ້ວ;

3. ສິນສົມສ້າງ ໝາຍເຖິງ ຊັບສົມບັດທີ່ຄູ່ຜົວເມຍນັ້ນສ້າງສາ ແລະ ຫາມາໄດ້ໃນເວລາເປັນຜົວເມຍນຳກັນ ເວັ້ນເສຍແຕ່ຊັບສິ່ງຂອງທີ່ເປັນເຄື່ອງໃຊ້ສ່ວນຕົວ ຊຶ່ງບໍ່ມີມູນຄ່າສູງ;
4. ການມອບຊັບ ໝາຍເຖິງ ການເອົາຊັບຂອງຕົນໃຫ້ບຸກຄົນອື່ນໂດຍບໍ່ມີເງື່ອນໄຂໃນເວລາຍັງມີຊີວິດຢູ່. ຜູ້ຮັບຊັບ ຈະກາຍເປັນເຈົ້າກຳມະສິດ ນັບແຕ່ເວລາໄດ້ຮັບຊັບນັ້ນເປັນຕົ້ນໄປ;
5. ການຍົກຊັບ ໝາຍເຖິງ ການເອົາຊັບຂອງຕົນໃຫ້ບຸກຄົນອື່ນໂດຍມີເງື່ອນໄຂໃນເວລາຍັງມີຊີວິດຢູ່. ຜູ້ຮັບຊັບ ຈະກາຍເປັນເຈົ້າກຳມະສິດໄດ້ກໍຕໍ່ເມື່ອ ຜູ້ກ່ຽວຫາກໄດ້ປະຕິບັດຕາມເງື່ອນໄຂທີ່ໄດ້ກຳນົດໄວ້ ໂດຍຖືກຕ້ອງຕາມກົດໝາຍ;
6. ພິໄນກຳ ໝາຍເຖິງ ເອກະສານທາງດ້ານກົດໝາຍ ທີ່ເຈົ້າຂອງຊັບໄດ້ສະແດງເຈດຈຳນົງຂອງຕົນ ດ້ວຍການເຮັດເປັນລາຍລັກອັກສອນ ຫລື ການສະເໜີທາງປາກເປົ່າມອບໃຫ້ບຸກຄົນ ຫລື ການຈັດຕັ້ງ ໂດຍຊ້ອງໜ້າພະຍານຢ່າງໜ້ອຍສາມຄົນ ແລະ ມີການບັນທຶກເອົາໄວ້;
7. ການສືບທອດມູນມໍລະດົກຕາມກົດໝາຍ ໝາຍເຖິງ ການຮັບເອົາມູນມໍລະດົກ ໂດຍຜູ້ສືບທອດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;
8. ການສືບທອດມູນມໍລະດົກຕາມພິໄນກຳ ໝາຍເຖິງ ການຮັບເອົາມູນມໍລະດົກ ໂດຍຜູ້ສືບທອດຕາມເຈດຈຳນົງ ຂອງເຈົ້າມູນມໍລະດົກທີ່ໄດ້ມອບໃຫ້.

ມາດຕາ 4(ໃໝ່). **ນະໂຍບາຍຂອງລັດກ່ຽວກັບມູນມໍລະດົກ**

ລັດ ອຳນວຍຄວາມສະດວກ, ປົກປ້ອງສິດ ແລະ ຜົນປະໂຫຍດ ຂອງບຸກຄົນໃນການມອບ, ຍົກ ຫລື ໂອນຊັບສິນຂອງຕົນໃຫ້ບຸກຄົນ, ການຈັດຕັ້ງ ຫລື ມູນນິທິ.

ລັດ ສົ່ງເສີມໃຫ້ບຸກຄົນ, ການຈັດຕັ້ງ ຫລື ມູນນິທິ ທີ່ໄດ້ຮັບການມອບ, ຍົກ, ໂອນຊັບສິນ ຫລື ສືບທອດມູນມໍລະດົກ ທັນຊັບສິນ ຫລື ມູນມໍລະດົກດັ່ງກ່າວເປັນທຶນ ແລະ ນຳໃຊ້ເຂົ້າໃນການດຳເນີນທຸລະກິດ ຫລື ສາທາລະນະປະໂຫຍດ.

ມາດຕາ 5( ປັບປຸງ). **ມູນມໍລະດົກຂອງຜູ້ຖືກສານຕັດສິນເປັນຜູ້ເສຍຊີວິດ**

ເມື່ອບຸກຄົນໃດຫາກຖືກສານຕັດສິນວ່າ ເປັນຜູ້ເສຽຊີວິດແລ້ວ ມູນມໍລະດົກຂອງບຸກຄົນນັ້ນ ກໍຈະຕົກທອດເປັນຂອງຜູ້ສືບທອດ. ຖ້າວ່າ ພາຍຫລັງມາບຸກຄົນນັ້ນຫາກຍັງມີຊີວິດຢູ່ ຜູ້ສືບທອດມູນມໍລະດົກຕ້ອງສົ່ງຊັບທີ່ຍັງຄົງຢູ່ຊຶ່ງຕົນໄດ້ຮັບນັ້ນຄືນ ແຕ່ເຈົ້າຂອງຊັບ ຕ້ອງໃຊ້ແທນຄ່າໃຊ້ຈ່າຍຕ່າງໆ ໃນການປົກປັກຮັກສາມູນມໍລະດົກນັ້ນ ຄືນໃຫ້ແກ່ຜູ້ສືບທອດ.

ໃນກໍລະນີ ຜູ້ຖືກສານຕັດສິນວ່າ ເປັນຜູ້ເສຍຊີວິດແລ້ວນັ້ນ ຫາກຍັງມີຊີວິດຢູ່ ແຕ່ບໍ່ມາທວງທາວເອົາຊັບສົມບັດຂອງຕົນຄືນ ພາຍໃນກຳນົດ ສາມປີ ສຳລັບຊັບເຄື່ອນທີ່, ຫົກປີ ສຳລັບຊັບຄົງທີ່ ນັບແຕ່

ວັນຜູ້ກ່ຽວຮັບຊາບຄຳຕັດສິນຂອງສານເປັນຕົ້ນໄປ ຊັບສິນບັດດັ່ງກ່າວ ກໍຈະຕົກເປັນຂອງຜູ້ສືບທອດ.

### ມາດຕາ 6. ວັນເວລາເປີດການສືບທອດມູນມໍຣະດົກ

ການເປີດການສືບທອດມູນມໍຣະດົກ ແມ່ນເລີ່ມແຕ່ວັນເຈົ້າມູນມໍຣະດົກໄດ້ເສຍຊີວິດເປັນຕົ້ນໄປ. ໃນກໍລະນີທີ່ເຈົ້າມູນມໍຣະດົກຫາກໄດ້ຖືກສານຕັດສິນວ່າເປັນຜູ້ເສຍຊີວິດນັ້ນ ກໍໃຫ້ຖືເອົາວັນຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ເປັນວັນເລີ່ມເປີດການສືບທອດມູນມໍຣະດົກ.

### ມາດຕາ 7. ບ່ອນເປີດການສືບທອດມູນມໍຣະດົກ

ບ່ອນເປີດການສືບທອດມູນມໍຣະດົກ ແມ່ນ ບ່ອນຢູ່ປະຈຳສຸດທ້າຍຂອງເຈົ້າມູນມໍຣະດົກ, ຖ້າວ່າບ່ອນຢູ່ຂອງເຈົ້າມູນມໍຣະດົກນັ້ນ ຫາກບໍ່ຈະແຈ້ງ ຫລື ມີບ່ອນຢູ່ຫຼາຍບ່ອນ ກໍໃຫ້ຖືເອົາບ່ອນມູນມໍຣະດົກທີ່ເປັນພື້ນຖານສຳຄັນຕັ້ງຢູ່ ເປັນບ່ອນເປີດ.

ການເປີດການສືບທອດມູນມໍຣະດົກ ຕ້ອງມີ ຜູ້ສືບທອດ, ຍາດພີ່ນ້ອງໃກ້ຊິດ ແລະ ພະຍານເຂົ້າຮ່ວມ ໂດຍເຮັດເປັນລາຍລັກອັກສອນ ແລະ ຊ້ອງໜ້າພະນັກງານທະບຽນສານ ຫລື ນາຍບ້ານ ໃນກໍລະນີທີ່ບ່ອນໃດບໍ່ທັນມີພະນັກງານທະບຽນສານ.

### ມາດຕາ 8. ປະເພດການສືບທອດມູນມໍຣະດົກ

ການສືບທອດມູນມໍຣະດົກ ມີສອງປະເພດ ຄື:

- ການສືບທອດຕາມກົດໝາຍ;
- ການສືບທອດຕາມພິໄນກຳ.

# ພາກທີ II

# ການສືບທອດມູນມໍຣະດົກຕາມກົດໝາຍ

### ມາດຕາ 9. ການສືບທອດຕາມກົດໝາຍ

ການສືບທອດມູນມໍຣະດົກຕາມກົດໝາຍ ຈະມີຂຶ້ນໄດ້ໃນກໍລະນີ ດັ່ງນີ້:

1. ມູນມໍຣະດົກທີ່ບໍ່ໄດ້ເຮັດພິໄນກຳມອບໃຫ້ບຸກຄົນ ຫລື ການຈັດຕັ້ງໃດໜຶ່ງສືບທອດ;
2. ພິໄນກຳເປັນໂມຄະ ຫລື ຜູ້ສືບທອດມູນມໍຣະດົກຕາມພິໄນກຳນັ້ນໄດ້ເສຍຊີວິດກ່ອນການເປີດການສືບທອດ;
3. ຜູ້ສືບທອດມູນມໍຣະດົກຕາມພິໄນກຳ ຫາກບໍ່ຮັບເອົາການສືບທອດ;
4. ມູນມໍຣະດົກທີ່ຍັງເຫຼືອຈາກການສືບທອດຕາມພິໄນກຳ.

**ມາດຕາ 10. ຜູ້ສືບທອດມູນມໍຣະດົກ**

ຜູ້ສືບທອດມູນມໍຣະດົກ ມີ ດັ່ງນີ້:

1. ລູກ (ລູກຄີງ, ລູກລ້ຽງ, ລູກນ້ຳ) ຂອງຜູ້ເສຍຊີວິດ ;
2. ຜົວ ຫລື ເມຍ ຂອງເຈົ້າມູນມໍຣະດົກທີ່ຍັງມີຊີວິດຢູ່;
3. ຍາດສາຍຕັ້ງ: ພໍ່, ແມ່, ປູ່, ຍ່າ, ພໍ່ເຖົ້າ, ແມ່ເຖົ້າ, ທວດ ຂອງຜູ້ເສຍຊີວິດ;
4. ຍາດສາຍຂວາງ: ອ້າຍ, ເອື້ອຍ, ນ້ອງ, ລຸງ, ປ້າ, ອາວ, ອາ, ນ້າບ່າວ, ນ້າສາວ, ຫລານ, ເຫລນ, ຫລ້ອນ ຂອງຜູ້ເສຍຊີວິດ;
5. ລັດ ຫລື ນິຕິບຸກຄົນ ຫລື ບຸກຄົນອື່ນ ທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້.

**ມາດຕາ 11(ໃໝ່). ລຳດັບໃນການຮັບມູນມໍຣະດົກ**

ໃນການແບ່ງປັນມູນມໍຣະດົກໃຫ້ຜູ້ສືບທອດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 10 ເທິງນີ້ ຖ້າວ່າຜູ້ໃດຫາກເປັນຍາດຊັ້ນຈຳກັບເຈົ້າມູນມໍຣະດົກ ກໍຈະແມ່ນຜູ້ນັ້ນເປັນຜູ້ໄດ້ຮັບກ່ອນ. ສ່ວນຜູ້ທີ່ຢູ່ລຳດັບໃກ້ຊິດຖັດຕໍ່ໄປນັ້ນ ຈະໄດ້ຮັບກໍຕໍ່ເມື່ອ ຫາກບໍ່ມີຍາດຊັ້ນຈຳຂອງເຈົ້າມູນມໍຣະດົກເທົ່ານັ້ນ.

ມາດຕາ 12. ການແບ່ງປັນມູນມໍຣະດົກລະຫວ່າງຜົວ ຫລື ເມຍທີ່ຍັງມີຊີວິດຢູ່ ແລະ ລູກ

ໃນກໍລະນີທີ່ຜົວ ຫລື ເມຍຫາກໄດ້ເສຍຊີວິດໄປ ໂດຍໄດ້ປະເມຍ ຫລື ຜົວ ແລະ ລູກໄວ້ ກໍແມ່ນລູກເປັນຜູ້ມີສິດຮັບມູນມໍຣະດົກທີ່ເປັນຊັບເດີມຂອງຜູ້ເສຍຊີວິດ ສາມສ່ວນສີ່ ແລະ ອີກໜຶ່ງສ່ວນສີ່ ແມ່ນເມຍ ຫລື ຜົວທີ່ຍັງມີຊີວິດຢູ່ ເປັນຜູ້ຮັບ.

ສ່ວນສິນສົມສ້າງນັ້ນໃຫ້ແບ່ງປັນເຄິ່ງ ຄື ເຄິ່ງໜຶ່ງໃຫ້ເມຍ ຫລື ຜົວທີ່ຍັງມີຊີວິດຢູ່ ແລະ ອີກເຄິ່ງໜຶ່ງນັ້ນໃຫ້ແບ່ງປັນແກ່ພວກລູກ ເປັນພູດສະເໝີກັນ.

ເມຍ ຫລື ຜົວທີ່ຍັງມີຊີວິດຢູ່ນັ້ນ ມີສິດຄຸ້ມຄອງຊັບທີ່ຕົກທອດເປັນຂອງລູກທີ່ຍັງບໍ່ທັນເຖິງກະສຽນອາຍຸ.

**ມາດຕາ 13. ການແບ່ງປັນມູນມໍຣະດົກລະຫວ່າງຜົວ ຫລື ເມຍທີ່ຍັງມີຊີວິດຢູ່ ແລະ ຍາດສາຍຕັ້ງ**

ໃນກໍລະນີທີ່ຜົວ ຫລື ເມຍຊຶ່ງບໍ່ມີລູກ ຫາກໄດ້ເສຍຊີວິດໄປຍັງເຫລືອແຕ່ເມຍ ຫລື ຜົວ ແລະ ຍາດສາຍຕັ້ງ ການແບ່ງປັນມູນມໍຣະດົກໃຫ້ປະຕິບັດ ດັ່ງນີ້:

1. ເມຍ ຫລື ຜົວທີ່ຍັງມີຊີວິດ ຈະໄດ້ຮັບສ່ວນແບ່ງປັນ ໜຶ່ງສ່ວນສາມຂອງຊັບເດີມຂອງຜູ້ເສຍຊີວິດ ແລະ ອີກສອງສ່ວນສາມນັ້ນ ໃຫ້ແບ່ງປັນແກ່ຍາດສາຍຕັ້ງເປັນພູດສະເໝີກັນ;
2. ເມຍ ຫລື ຜົວທີ່ຍັງມີຊີວິດຢູ່ນັ້ນ ຈະໄດ້ຮັບສິນສົມສ້າງ ທີ່ເປັນພູດຂອງຜູ້ເສຍຊີວິດທັງໝົດ.

**ມາດຕາ 14(ປັບປຸງ). ການແບ່ງປັນມູນມໍຣະດົກລະຫວ່າງຍາດສາຍຂວາງ**

ຖ້າວ່າຜູ້ເສຍຊີວິດຫາກບໍ່ມີລູກ ແລະ ບໍ່ມີຍາດສາຍຕັ້ງ ແຕ່ຫາກຍັງມີຜົວ ຫລື ເມຍນັ້ນ ຍາດສາຍຂວາງ ຕາມລຳດັບໃກ້ຊິດຂອງຜູ້ເສຍຊີວິດ ຈະໄດ້ຮັບມູນມໍຣະດົກທີ່ເປັນຊັບເດີມຂອງຜູ້ເສຍຊີວິດພຽງ

ແຕ່ເຄິ່ງໜຶ່ງເທົ່ານັ້ນ, ສ່ວນອີກເຄິ່ງໜຶ່ງ ແລະ ສິນສົມສ້າງທັງໝົດນັ້ນ ຈະຕົກເປັນຂອງເມຍ ຫລື ຜົວທີ່ຍັງມີຊີວິດຢູ່.

ການແບ່ງປັນມູນມໍລະດົກລະຫວ່າງຍາດສາຍຂວາງນັ້ນ ໃຫ້ແບ່ງປັນເປັນພູດສະເໝີກັນ.

**ມາດຕາ 15(ປັບປຸງ). ການແບ່ງປັນມູນມໍລະດົກລະຫວ່າງພວກລູກຂອງຜູ້ເສຍຊີວິດ**

ການແບ່ງປັນມູນມໍລະດົກ ລະຫວ່າງພວກລູກຂອງຜູ້ເສຍຊີວິດ ໃຫ້ປະຕິບັດ ດັ່ງນີ້:

1. ຖ້າວ່າຜູ້ເສຍຊີວິດຫາກມີແຕ່ລູກຄີງເທົ່ານັ້ນ ມູນມໍລະດົກທັງໝົດຊຶ່ງເປັນສິນສົມສ້າງ ແລະ ຊັບເດີມ ທີ່ຕົກທອດແກ່ພວກກ່ຽວ ກໍໃຫ້ແບ່ງປັນເປັນພູດສະເໝີກັນ ເວັ້ນເສຍແຕ່ຊັບເດີມຂອງຜູ້ເສຍຊີວິດທີ່ໄດ້ກໍານົດໄວ້ໃນມາດຕາ 12 ຂອງກົດໝາຍສະບັບນີ້;
2. ຖ້າວ່າຜູ້ເສຍຊີວິດຫາກມີລູກຄີງ, ລູກລ້ຽງ ແລະ ລູກນ້າ ມູນມໍລະດົກທີ່ເປັນພູດສິນສົມສ້າງຂອງຜູ້ກ່ຽວ ໃຫ້ແບ່ງປັນເປັນພູດສະເໝີກັນຕາມຂໍ້ 1 ເທິງນີ້;
3. ລູກລ້ຽງ ມີສິດໄດ້ຮັບພູດທີ່ເປັນຊັບເດີມຂອງຜູ້ເສຍຊີວິດຄືກັນກັບລູກຄີງ, ສໍາລັບລູກນ້າ ບໍ່ມີສິດໄດ້ຮັບພູດທີ່ເປັນຊັບເດີມຂອງພໍ່ນ້າ ຫລື ແມ່ນ້າ ທີ່ເສຍຊີວິດ;
4. ລູກລ້ຽງ ບໍ່ມີສິດສືບທອດມູນມໍລະດົກ ຂອງຜູ້ເປັນພໍ່ແມ່ເດີມຂອງຕົນອີກ ເວັ້ນເສຍແຕ່ມີພິໄນກໍາຈາກພໍ່ແມ່ເດີມມອບໃຫ້ຕົນເທົ່ານັ້ນ;

ສໍາລັບລູກຄີງ, ລູກລ້ຽງ, ລູກນ້າ ທີ່ໄດ້ລ້ຽງດູ, ເບິ່ງແຍງພໍ່ແມ່ຕະຫຼອດຮອດເສຍຊີວິດ ແລະ ມີງານຄາບສິ່ງສະການ ກໍຈະໄດ້ຮັບສ່ວນແບ່ງມູນມໍລະດົກຂອງຜູ້ເສຍຊີວິດຫລາຍກວ່າຜູ້ສືບທອດຄົນອື່ນໜຶ່ງພູດ.

**ມາດຕາ 16. ສິດສືບທອດຂອງລູກທີ່ຍັງຢູ່ໃນທ້ອງແມ່**

ລູກທີ່ຍັງຢູ່ໃນທ້ອງຂອງຜູ້ເປັນແມ່ ກໍມີສິດຮັບສ່ວນແບ່ງປັນມູນມໍລະດົກທີ່ຕົກເປັນພູດຂອງຜູ້ເສຍຊີວິດ ເຊັ່ນດຽວກັນ. ແມ່ ເປັນຜູ້ຄຸ້ມຄອງພູດຂອງຜູ້ກ່ຽວໄວ້.

**ມາດຕາ 17. ການສືບທອດມູນມໍລະດົກ ລະຫວ່າງຫົວໜ້າຄອບຄົວ ແລະ ຜູ້ຮັບໃຊ້**

ຖ້າວ່າຫົວໜ້າຄອບຄົວຫາກໄດ້ເສຍຊີວິດ ໂດຍບໍ່ມີຜູ້ສືບທອດມູນມໍລະດົກແລ້ວ ຜູ້ຮັບໃຊ້ທີ່ຢູ່ໃນຄອບຄົວນັ້ນ ແຕ່ສາມປີຂຶ້ນໄປ ກໍຈະໄດ້ສືບທອດມູນມໍລະດົກນັ້ນ.

ຖ້າວ່າຜູ້ຮັບໃຊ້ຫາກໄດ້ເສຍຊີວິດ ໂດຍບໍ່ມີຜູ້ສືບທອດມູນມໍລະດົກແລ້ວ ຫົວໜ້າຄອບຄົວ ກໍຈະໄດ້ສືບທອດມູນມໍລະດົກຂອງຜູ້ຮັບໃຊ້ ເຊັ່ນດຽວກັນ.

**ມາດຕາ 18(ປັບປຸງ). ມູນມໍລະດົກທີ່ບໍ່ມີຜູ້ສືບທອດ**

ເມື່ອບຸກຄົນໃດໜຶ່ງຫາກໄດ້ເສຍຊີວິດ ໂດຍບໍ່ມີຜູ້ສືບທອດມູນມໍລະດົກ ຫລື ບໍ່ຮູ້ວ່າຜູ້ສືບທອດນັ້ນຢູ່ໃສ ພາຍໃນກໍານົດຫົກເດືອນ ຖ້າວ່າບໍ່ມີຜູ້ໃດມາທວງຫາເອົາແລ້ວ ມູນມໍລະດົກທັງໝົດນັ້ນ ຈະແມ່ນລັດເປັນຜູ້ຄຸ້ມຄອງໄວ້.

ຖ້າຫາກໝົດອາຍຸຄວາມໃນການຮ້ອງຟ້ອງຕາມທີ່ໄດ້ກຳນົດໄວ້ໃນມາດຕາ 40 ຂອງກົດໝາຍສະບັບນີ້ແລ້ວ ມູນມໍຣະດົກດັ່ງກ່າວ ກໍຈະຕົກເປັນກຳມະສິດຂອງລັດ.

ພະນັກງານທະບຽນສານ ຫລື ນາຍບ້ານ ທີ່ໄດ້ເຂົ້າຮ່ວມໃນການເປີດການສືບທອດມູນມໍຣະດົກນັ້ນ ເປັນຜູ້ກຳນົດເອົາຊັບສົມບັດສ່ວນໃດໜຶ່ງຂອງຜູ້ເສຍຊີວິດ ເພື່ອໃຊ້ຈ່າຍເຂົ້າໃນການມ້ຽນຄາບສິ່ງສະການ, ເຮັດບຸນກິນທານ ແລະ ຊຳລະໜີ້ສິນຂອງຜູ້ເສຍຊີວິດ.

ມາດຕາ 19(ປັບປຸງ). ມູນມໍຣະດົກຂອງພິກຂຸ, ສາມະເນນ ຫລື ນັກບວດອື່ນ

ພິກຂຸ, ສາມະເນນ ຫຼື ນັກບວດອື່ນ ທີ່ມີຊັບກ່ອນບວດ ຫຼື ມີໃນໄລຍະບວດນັ້ນ ແມ່ນມີສິດມອບຊັບ, ຍົກຊັບ ຫຼື ເຮັດພິໄນກຳ ໃຫ້ບຸກຄົນ ຫຼື ການຈັດຕັ້ງອື່ນ ຕາມລະບຽບກົດໝາຍ ລວມທັງມີສິດ ໃຫ້ຜູ້ອື່ນສືບທອດມູນມໍຣະດົກຂອງຕົນ ຕາມກົດໝາຍ.

ໃນກໍລະນີທີ່ພິກຂຸ, ສາມະເນນ ຫລື ນັກບວດອື່ນ ຫາກໄດ້ເສຍຊີວິດໂດຍບໍ່ມີຜູ້ສືບທອດມູນມໍຣະດົກ ຫລື ບໍ່ໄດ້ມອບຊັບໃດໜຶ່ງໃຫ້ບຸກຄົນ, ການຈັດຕັ້ງ ຫລື ມູນນິທິໃດໜຶ່ງແລ້ວ ຊັບທັງໝົດນັ້ນກໍຈະຕົກເປັນຂອງວັດ ຫລື ສາສະນາສະຖານ ບ່ອນຜູ້ກ່ຽວຢູ່ປະຈຳ.

**ມາດຕາ 20. ສິດສືບທອດມູນມໍຣະດົກຂອງຜົວເມຍທີ່ແຍກກັນຢູ່**

ຜົວເມຍທີ່ໄດ້ແຍກກັນຢູ່ຕ່າງຫາກ ແຕ່ຍັງບໍ່ທັນໄດ້ຢ່າຮ້າງກັນໂດຍຖືກຕ້ອງຕາມກົດໝາຍນັ້ນ ກໍຍັງມີສິດສືບທອດມູນມໍຣະດົກຂອງກັນ ແລະ ກັນໄດ້ຢູ່ ເມື່ອຜູ້ໃດໜຶ່ງຫາກໄດ້ເສຍຊີວິດ.

**ມາດຕາ 21. ຜູ້ສືບທອດມູນມໍຣະດົກແທນທີ່ກັນ**

ເມື່ອບຸກຄົນທີ່ເປັນຜູ້ສືບທອດມູນມໍຣະດົກຕາມກົດໝາຍ ຫາກໄດ້ເສຍຊີວິດກ່ອນເຈົ້າມູນມໍຣະດົກແລ້ວ ຜູ້ສືບທອດຂອງບຸກຄົນນັ້ນ ກໍມີສິດສືບທອດມູນມໍຣະດົກແທນຜູ້ກ່ຽວຕາມລຳດັບ. ເມື່ອຜູ້ສືບທອດມູນມໍຣະດົກແທນທີ່ນີ້ ຫາກໄດ້ເສຍຊີວິດ ກໍໃຫ້ຜູ້ສືບທອດຜູ້ຕໍ່ໄປ ໄດ້ຮັບມູນມໍຣະດົກແທນທີ່ກັນ ແລະ ຕໍ່ໆໄປ.

**ມາດຕາ 22. ເງື່ອນໄຂຂອງການສືບທອດມູນມໍຣະດົກແທນທີ່ກັນ**

ຜູ້ສືບທອດມູນມໍຣະດົກແທນທີ່ກັນ ຕ້ອງຢູ່ພາຍໃຕ້ເງື່ອນໄຂ ດັ່ງນີ້:

- ເປັນຜູ້ສືບທອດມູນມໍຣະດົກຕາມກົດໝາຍ;
- ເປັນລູກຂອງ ບຸກຄົນທີ່ມີສິດສືບທອດມູນມໍຣະດົກ ຊຶ່ງໄດ້ເສຍຊີວິດກ່ອນແລ້ວ.

**ມາດຕາ 23. ສິດຂອງຜູ້ສະລະມູນມໍຣະດົກ**

ຜູ້ສືບທອດທີ່ໄດ້ສະລະມູນມໍຣະດົກ ຊຶ່ງຕົກເປັນພູດຂອງຕົນໃຫ້ຜູ້ອື່ນແລ້ວ ກໍຍັງມີສິດຮັບມູນມໍຣະດົກແທນທີ່ກັນ ແຕ່ຫາກບໍ່ແມ່ນພູດທີ່ຕົນໄດ້ສະລະໄປແລ້ວນັ້ນ.

# ພາກທີ III
# ການສືບທອດມູນມໍລະດົກຕາມພິໄນກຳ

**ມາດຕາ 24. ສິດໃນການມອບຊັບ, ຍົກຊັບ ຫລື ການເຮັດພິໄນກຳ**

ພົນລະເມືອງທຸກຄົນ ມີສິດ ມອບຊັບ, ຍົກຊັບ ຫລື ເຮັດພິໄນກຳ ໃຫ້ບຸກຄົນໃດໜຶ່ງ ຫລື ໃຫ້ຫລາຍຄົນ, ໃຫ້ອົງການຈັດຕັ້ງຂອງລັດ, ລວມໝູ່ ແລະ ອົງການຈັດຕັ້ງສັງຄົມ, ກອງທຶນ, ມູນນິທິຕ່າງໆ ຫລື ສະຫງວນໄວ້ສ່ວນໃດໜຶ່ງ ເພື່ອເປັນບ່ອນສັກກາລະບູຊາ ຫລື ຮັກສາໃຫ້ຍາດພີ່ນ້ອງທີ່ຂາດເຂີນ ສາມາດສ້າງຢູ່ທຳກິນ ຕາມເຈດຈຳນົງຂອງຕົນກ່ອນເສຍຊີວິດ.

**ມາດຕາ 25(ປັບປຸງ). ຂອບເຂດສິດໃນການມອບ, ຍົກຊັບ ຫລື ການເຮັດພິໄນກຳ**

ເຈົ້າຂອງຊັບທີ່ຍັງມີຊີວິດຢູ່ ຈະມອບ, ຍົກຊັບ ຫລື ເຮັດພິໄນກຳ ແມ່ນໃຫ້ປະຕິບັດ ດັ່ງນີ້:

1. ຖ້າວ່າເຈົ້າມູນມໍລະດົກຫາກມີລູກໜຶ່ງຄົນ ແມ່ນບໍ່ໃຫ້ເກີນເຄິ່ງໜຶ່ງຂອງຊັບທັງໝົດ;
2. ຖ້າວ່າເຈົ້າມູນມໍລະດົກຫາກມີລູກສອງຄົນ ແມ່ນບໍ່ໃຫ້ເກີນໜຶ່ງສ່ວນສາມຂອງຊັບທັງໝົດ;
3. ຖ້າວ່າເຈົ້າມູນມໍລະດົກຫາກມີລູກສາມຄົນຂຶ້ນໄປ ແມ່ນບໍ່ໃຫ້ກາຍໜຶ່ງສ່ວນສີ່ຂອງຊັບທັງໝົດ.

ເມື່ອການມອບຊັບ, ການຍົກຊັບ ຫລື ການເຮັດພິໄນກຳ ຫາກເກີນກວ່າຈຳນວນທີ່ໄດ້ກຳນົດໄວ້ເທິງນີ້ ສ່ວນທີ່ເກີນນັ້ນ ຖືເປັນໂມຄະ ແລ້ວໃຫ້ນຳມາແບ່ງປັນຕາມການສືບທອດຕາມກົດໝາຍ.

**ມາດຕາ 26. ຮູບການການເຮັດພິໄນກຳ**

ພິໄນກຳ ສາມາດເຮັດຂຶ້ນໃນສອງຮູບການ ດັ່ງນີ້:

1. ພິໄນກຳເປັນລາຍລັກອັກສອນ;
2. ພິໄນກຳທາງປາກເປົ່າ.

**ມາດຕາ 27. ພິໄນກຳເປັນລາຍລັກອັກສອນ**

ການເຮັດພິໄນກຳເປັນລາຍລັກອັກສອນ ອາດຈະຂຽນໂດຍເຈົ້າມູນມໍລະດົກເອງ. ຖ້າຫາກຜູ້ອື່ນຂຽນໃຫ້ ກໍຕ້ອງມີພະຍານຢ່າງໜ້ອຍສາມຄົນເຂົ້າຮ່ວມນຳ ແຕ່ຕ້ອງຮັກສາຄວາມລັບໄວ້ຈົນກວ່າຈະມີການເປີດການສືບທອດມູນມໍລະດົກ.

ໃນພິໄນກຳນັ້ນ ຕ້ອງບອກສະຖານທີ່, ວັນ, ເດືອນ, ປີ ເຮັດພິໄນກຳ, ປະເພດ ແລະ ຈຳນວນຊັບທີ່ຈະມອບ, ຊື່ ແລະ ນາມສະກຸນຂອງ ຜູ້ມອບ ແລະ ຜູ້ຮັບ, ຜູ້ຂຽນ ແລະ ຂອງພະຍານ.

ຜູ້ມອບ, ຜູ້ຂຽນ ແລະ ພະຍານ ຕ້ອງລົງລາຍເຊັນ ແລະ ແປະໂປ້ມືໃສ່ພິໄນກຳ.

ພິໄນກຳນັ້ນ ຫລັງຈາກເຮັດແລ້ວ ຕ້ອງໃສ່ຊອງຕິດໃຫ້ແໜ້ນ ຫລື ຕິດດ້ວຍຄັ່ງ ແລ້ວໄປຂຶ້ນທະບຽນນຳພະນັກງານທະບຽນສານບ່ອນເຈົ້າມູນມໍຣະດົກຢູ່ ຫລື ບ່ອນທີ່ໃກ້ຄຽງ ຫລື ນຳໄປໄວ້ຢູ່ອົງການປົກຄອງບ້ານ ສຳລັບບ່ອນທີ່ບໍ່ມີສຳນັກງານທະບຽນສານ.

**ມາດຕາ 28. ພິໄນກຳທາງປາກເປົ່າ**

ເຈົ້າຂອງຊັບທີ່ບໍ່ສາມາດເຮັດພິໄນກຳເປັນລາຍລັກອັກສອນໄດ້ ຍ້ອນຕົກຢູ່ໃນສະພາບອັນຕະລາຍທີ່ໃກ້ຈະເສຍຊີວິດ, ຍ້ອນສຸຂະພາບອ່ອນເພຍ ຫລື ຍ້ອນສາເຫດອື່ນ ຈະເຮັດພິໄນກຳທາງປາກເປົ່າກໍໄດ້ ໂດຍຊ້ອງໜ້າພະຍານຢ່າງໜ້ອຍສາມຄົນ.

ພະຍານດັ່ງກ່າວ ຕ້ອງແຈ້ງຂໍ້ຄວາມທັງໝົດທີ່ເຈົ້າມູນມໍຣະດົກໄດ້ສັ່ງໄວ້ ຕໍ່ສຳນັກງານທະບຽນສານ ຫລື ອົງການປົກຄອງບ້ານໃນທັນໃດ ແລະ ຊີ້ແຈງສາເຫດທີ່ພາໃຫ້ເຈົ້າຂອງຊັບນັ້ນບໍ່ສາມາດເຮັດພິໄນກຳເປັນລາຍລັກອັກສອນໄດ້.

ພິໄນກຳທາງປາກເປົ່ານັ້ນ ຈະບໍ່ມີຜົນໃຊ້ໄດ້ ຖ້າຫາກກາຍກຳນົດໜຶ່ງເດືອນ ນັບແຕ່ວັນເຈົ້າຂອງຊັບ ໄດ້ກັບຄືນສູ່ສະພາບປົກກະຕິ.

**ມາດຕາ 29. ຜູ້ສືບທອດສຳຮອງ**

ເຈົ້າຂອງຊັບ ມີສິດແຕ່ງຕັ້ງຜູ້ສືບທອດສຳຮອງເພື່ອແທນທີ່ຜູ້ສືບທອດມູນມໍຣະດົກຊຶ່ງຕົນໄດ້ກຳນົດໄວ້ກ່ອນນັ້ນ ໃນກໍລະນີທີ່ຜູ້ສືບທອດຜູ້ນີ້ຫາກໄດ້ເສຍຊີວິດກ່ອນການເປີດພິໄນກຳ ຫລື ບໍ່ຮັບເອົາມູນມໍຣະດົກ ຕາມພິໄນກຳນັ້ນ.

**ມາດຕາ 30. ສິດຂອງຜູ້ສືບທອດມູນມໍຣະດົກຕາມພິໄນກຳ**

ຜູ້ສືບທອດທີ່ໄດ້ຮັບມູນມໍຣະດົກຕາມພິໄນກຳແລ້ວ ກໍຍັງມີສິດໄດ້ຮັບພູດສ່ວນມູນມໍຣະດົກທີ່ຕົກທອດໃຫ້ຕົນຕາມກົດໝາຍ ອີກດ້ວຍ.

**ມາດຕາ 31. ຜູ້ບໍ່ມີສິດຮັບຊັບຕາມພິໄນກຳເປັນລາຍລັກອັກສອນ**

ຜູ້ຂຽນພິໄນກຳ, ພະຍານໃນພິໄນກຳ, ຜົວ ຫລື ເມຍ ຫລື ລູກຂອງພວກກ່ຽວ ບໍ່ມີສິດໄດ້ຮັບ ຊັບຕາມພິໄນກຳນັ້ນ.

**ມາດຕາ 32(ປັບປຸງ). ການແຕ່ງຕັ້ງຜູ້ຄຸ້ມຄອງມູນມໍຣະດົກ**

ເຈົ້າຂອງຊັບ ມີສິດແຕ່ງຕັ້ງຜູ້ຄຸ້ມຄອງມູນມໍຣະດົກ ໃນກໍລະນີທີ່ຜູ້ກ່ຽວ ຫາກມີຈຸດປະສົງ ເຮັດພິໄນກຳມອບມູນມໍຣະດົກ ໃຫ້ບຸກຄົນທີ່ຍັງບໍ່ທັນເຖິງກະສຽນອາຍຸ ຫລື ເປັນບ້າເສຍຈິດ.

ຜູ້ຄຸ້ມຄອງມູນມໍຣະດົກນັ້ນ ອາດຈະແຕ່ງຕັ້ງບຸກຄົນອື່ນເປັນຜູ້ຄຸ້ມຄອງ**ມູນມໍຣະດົກ**ແທນຕົນກໍໄດ້ ເວັ້ນເສຍແຕ່ເຈົ້າຂອງຊັບ ຫາກໄດ້ກຳນົດໄວ້ຢ່າງອື່ນໃນພິໄນກຳ.

ສິດຂອງຜູ້ຄຸ້ມຄອງມູນມໍຣະດົກ ຈະໝົດໄປ ເມື່ອເດັກນັ້ນ ຫາກເຖິງກະສຽນອາຍຸສິບແປດປີ ຫລື ຜູ້ເປັນບ້າເສຍຈິດ ຫາກໄດ້ກັບຄືນສູ່ສະພາບປົກກະຕິແລ້ວ.

**ມາດຕາ 33(ປັບປຸງ). ການປ່ຽນແປງ ຫລື ລຶບລ້າງພິໄນກຳ**

ເຈົ້າຂອງຊັບ ມີສິດປ່ຽນແປງ ຫລື ລຶບລ້າງພິໄນກຳ ທີ່ຕົນເຮັດຂຶ້ນໄດ້ທຸກເວລາ ດ້ວຍການເຮັດພິໄນກຳໃໝ່.

ພິໄນກຳທີ່ເຮັດຂຶ້ນໃໝ່ນີ້ ຈະລຶບລ້າງພິໄນກຳເກົ່າ ສ່ວນໃດໜຶ່ງ ຫລື ທັງໝົດ ທີ່ມີຂໍ້ຄວາມ ຂັດກັບພິໄນກຳໃໝ່.

**ມາດຕາ 34. ສາເຫດທີ່ພາໃຫ້ພິໄນກຳຕົກໄປ**

ພິໄນກຳ ທີ່ເຮັດຂຶ້ນ ຈະຕົກໄປດ້ວຍສາເຫດ ດັ່ງນີ້:

1. ເມື່ອຜູ້ສືບທອດມູນມໍຣະດົກຕາມພິໄນກຳ ຫາກໄດ້ເສຍຊີວິດກ່ອນເຈົ້າມູນມໍຣະດົກ;
2. ເມື່ອຜູ້ສືບທອດມູນມໍຣະດົກຕາມພິໄນກຳ ຫາກໄດ້ສະລະມູນມໍຣະດົກພູດທີ່ຕົນມີສິດໄດ້ຮັບ ຕາມພິໄນກຳ;
3. ເມື່ອຊັບສິນບັດທີ່ຕົກທອດຕາມພິໄນກຳນັ້ນ ຫາກໄດ້ຖືກສູນຫາຍ ຫລື ຖືກທຳລາຍດ້ວຍເຈົ້າມູນມໍຣະດົກ;
4. ເມື່ອພິໄນກຳນັ້ນ ຫາກໄດ້ຖືກຮັບຮູ້ວ່າເປັນໂມຄະ.

**ມາດຕາ 35. ພິໄນກຳເປັນໂມຄະ**

ພິໄນກຳ ຈະເປັນໂມຄະໃນກໍລະນີ ດັ່ງນີ້:

1. ພິໄນກຳ ທີ່ເຮັດຂຶ້ນໂດຍບຸກຄົນທີ່ຍັງບໍ່ທັນເຖິງກະສຽນອາຍຸສິບແປດປີ ຫລື ເປັນບ້າເສຍຈິດ;
2. ພິໄນກຳ ທີ່ມີເປົ້າໝາຍບໍ່ຈະແຈ້ງ;
3. ພິໄນກຳ ທີ່ເຮັດຂຶ້ນດ້ວຍການຖືກບັງຄັບ, ຫລອກລວງ ຫລື ປອມແປງ;
4. ພິໄນກຳ ທີ່ໄດ້ມອບຊັບໃຫ້ແກ່ບຸກຄົນຊຶ່ງໄດ້ກຳນົດໄວ້ໃນມາດຕາ 31 ຂອງກົດໝາຍສະບັບນີ້.

**ມາດຕາ 36(ປັບປຸງ). ການແຕ່ງຕັ້ງຜູ້ປະຕິບັດພິໄນກຳ**

ຜູ້ປະຕິບັດພິໄນກຳ ອາດຈະຖືກແຕ່ງຕັ້ງໂດຍ:

1. ເຈົ້າຂອງຊັບ;
2. ບຸກຄົນ ຊຶ່ງໄດ້ກຳນົດໄວ້ໃນພິໄນກຳ ຫລື ຜູ້ໃດໜຶ່ງ ທີ່ມີສິດສືບທອດມູນມໍຣະດົກ;

3. ສານປະຊາຊົນ ໃນກໍລະນີ ເຈົ້າຂອງຊັບ ຫາກບໍ່ໄດ້ແຕ່ງຕັ້ງຜູ້ປະຕິບັດພິໄນກຳໄວ້, ຜູ້ຖືກແຕ່ງຕັ້ງນັ້ນ ໄດ້ເສຍຊີວິດ, ເປັນຜູ້ຫາຍສາບສູນ, ບໍ່ມີຄວາມສາມາດທາງດ້ານການປະພຶດ, ບໍ່ຈິງໃຈປະຕິບັດ ຫລື ບໍ່ສາມາດປະຕິບັດໄດ້.

**ມາດຕາ 37. ສິດ ແລະ ພັນທະຂອງຜູ້ປະຕິບັດພິໄນກຳ**

ພິໄນກຳ ຈະນຳມາປະຕິບັດໄດ້ກໍຕໍ່ເມື່ອ ເຈົ້າຂອງຊັບຫາກໄດ້ເສຍຊີວິດໄປແລ້ວ.

ຜູ້ປະຕິບັດພິໄນກຳ ມີສິດເຮັດສິ່ງທີ່ຈຳເປັນ ແລະເໝາະສົມ ເພື່ອປະຕິບັດພິໄນກຳໃຫ້ປາກົດຜົນເປັນຈິງ.

ຜູ້ປະຕິບັດພິໄນກຳ ຈະບໍ່ໄດ້ຮັບບຳເນັດໃນການປະຕິບັດພິໄນກຳນັ້ນ ແຕ່ຫາກມີສິດໄດ້ຮັບຄ່າທົດແທນການໃຊ້ຈ່າຍອັນຈຳເປັນໃນການປົກປັກຮັກສາ ແລະ ຄຸ້ມຄອງມູນມໍຣະດົກນັ້ນ.

ຜູ້ປະຕິບັດພິໄນກຳ ມີພັນທະລາຍງານ ກ່ຽວກັບການຈັດຕັ້ງປະຕິບັດພິໄນກຳດັ່ງກ່າວ ໃຫ້ຜູ້ສືບທອດມູນມໍຣະດົກຊາບ.

## ພາກທີ IV
## ການຮັບ, ການສະລະ ແລະ ການເສຍສິດສືບທອດ ມູນມໍຣະດົກ
### ໝວດທີ 1
### ການຮັບ ແລະ ການສະລະ ມູນມໍຣະດົກ

**ມາດຕາ 38(ປັບປຸງ). ການສະເໜີເປີດການສືບທອດມູນມໍຣະດົກ**

ຜູ້ສືບທອດມູນມໍຣະດົກຜູ້ໃດໜຶ່ງ ມີສິດສະເໜີເປີດການສືບທອດມູນມໍຣະດົກເວລາໃດກໍໄດ້ ເວັ້ນເສຍແຕ່ມີການກຳນົດໄວ້ໃນພິໄນກຳ ຫລື ມີການຕົກລົງກັນໄວ້ ຢ່າງອື່ນ.

ຖ້າຫາກມີຜູ້ສືບທອດມູນມໍຣະດົກຜູ້ໃດໜຶ່ງ ທີ່ຍັງບໍ່ທັນເຖິງກະສຽນອາຍຸ ການແບ່ງປັນມູນມໍຣະດົກ ຈະຍືດເວລາອອກໄປຈົນກວ່າຜູ້ກ່ຽວຈະເຖິງກະສຽນອາຍຸ ສິບແປດປີ ກໍໄດ້. ໃນກໍລະນີທີ່ມີ ການແບ່ງປັນມູນມໍຣະດົກໃນເວລານັ້ນ ກໍຕ້ອງໃຫ້ພະນັກງານທະບຽນສານ ຫລື ນາຍບ້ານເປັນຜູ້ເຂົ້າຮ່ວມຢັ້ງຢືນ.

ໃນກໍລະນີໃດກໍຕາມ ຖ້າວ່າຜົວ ຫລື ເມຍ ຫາກເສຍຊີວິດ ແລະ ຜູ້ມີຊີວິດຢູ່ນັ້ນ ຫາກໄດ້ເອົາເມຍ ຫລື ຜົວໃໝ່ ພວກລູກກໍມີສິດສະເໜີແບ່ງປັນມູນມໍຣະດົກນັ້ນໄດ້.

**ມາດຕາ 39. ການເຮັດບັນຊີມູນມໍຣະດົກ**

ກ່ອນການແບ່ງປັນມູນມໍຣະດົກ ຕ້ອງເຮັດບັນຊີຊັບສົມບັດຕ່າງໆຂອງເຈົ້າມູນມໍຣະດົກ ດັ່ງນີ້:

1. ຊັບສິນບັດ ຊຶ່ງເຈົ້າມູນມໍຣະດົກໄດ້ເອົາໃຫ້ຜູ້ອື່ນຢືມ, ກູ້ຢືມ ຫລື ເອົາໄປຝາກ ຫລື ຊວດຈຳນຳຜູ້ອື່ນ, ຖືກຜູ້ອື່ນສໍ້ໂກງ, ປິດບັງ, ຍັກຍອກເອົາ ກ່ອນການເສຍຊີວິດ;
2. ການໃຊ້ຈ່າຍຄ່າມ້ຽນຄາບສົ່ງສະການ ແລະ ໜີ້ສິນຂອງເຈົ້າມູນມໍຣະດົກ.

ພາຍຫລັງທີ່ໄດ້ສະສາງບັນຊີລາຍຮັບ-ລາຍຈ່າຍສຳເລັດແລ້ວ ຜູ້ສືບທອດມູນມໍຣະດົກ ຈຶ່ງແບ່ງປັນຊັບດັ່ງກ່າວຕາມພູດຂອງໃຜລາວ.

**ມາດຕາ 40(ປັບປຸງ). ອາຍຸຄວາມໃນການຮ້ອງຟ້ອງເອົາມູນມໍຣະດົກ**

ການຮ້ອງຟ້ອງເອົາມູນມໍຣະດົກ ສາມາດເຮັດຂຶ້ນໄດ້ ພາຍໃນກຳນົດເວລາສາມປີ ນັບແຕ່ວັນເຈົ້າມູນມໍຣະດົກໄດ້ເສຍຊີວິດເປັນຕົ້ນໄປ. ຖ້າຫາກກາຍກຳນົດເວລາດັ່ງກ່າວ ສິດໃນການຮ້ອງ ຟ້ອງຈະຕົກໄປ ເວັ້ນເສຍແຕ່ໃນກໍລະນີ ຜູ້ສືບທອດມູນມໍລະດົກນັ້ນ ຫາກມີອາຍຸບໍ່ເຖິງ ສິບແປດ ປີ ພາຍຫຼັງເຈົ້າມູນມໍຣະດົກໄດ້ເສຍຊີວິດ ຫລື ມີເຫດຜົນອື່ນພຽງພໍ.

**ມາດຕາ 41. ການແບ່ງປັນມູນມໍຣະດົກທີ່ຢູ່ໃນການຄຸ້ມຄອງຂອງຜູ້ສືບທອດຜູ້ໃດໜຶ່ງ**

ຜູ້ສືບທອດມູນມໍຣະດົກທີ່ໄດ້ຄຸ້ມຄອງມູນມໍຣະດົກ ຊຶ່ງຍັງບໍ່ທັນໄດ້ແບ່ງປັນນັ້ນ ມີສິດສະເໜີແບ່ງປັນມູນມໍຣະດົກດັ່ງກ່າວໄດ້ທຸກເວລາ ເຖິງວ່າອາຍຸຄວາມທີ່ໄດ້ກຳນົດໄວ້ໃນມາດຕາ 40 ຂອງກົດໝາຍສະບັບນີ້ ຈະໝົດແລ້ວກໍຕາມ.

**ມາດຕາ 42(ປັບປຸງ). ການຮັບມູນມໍຣະດົກ**

ຜູ້ສືບທອດມູນມໍຣະດົກຕາມກົດໝາຍ ຈະຖືວ່າເປັນຜູ້ຮັບມູນມໍຣະດົກ ກໍຕໍ່ເມື່ອໄດ້ສະແດງເຈດຈຳນົງຂອງຕົນ ຮັບເອົາມູນມໍຣະດົກຕໍ່ອົງການປົກຄອງບ້ານບ່ອນທີ່ເປີດການສືບທອດ.

ຜູ້ສືບທອດມູນມໍຣະດົກຕາມພິໄນກຳ ຈະຖືວ່າເປັນຜູ້ຮັບມູນມໍຣະດົກ ກໍຕໍ່ເມື່ອໄດ້ສະແດງເຈດຈຳນົງຂອງຕົນ ຮັບເອົາມູນມໍຣະດົກຕໍ່ສຳນັກງານທະບຽນສານບ່ອນທີ່ໄດ້ເກັບຮັກສາພິໄນກຳໄວ້ ຫລື ຕໍ່ອົງການປົກຄອງບ້ານສຳລັບບ່ອນທີ່ບໍ່ມີສຳນັກງານທະບຽນສານ.

ການຮັບເອົາມູນມໍຣະດົກນັ້ນ ຕ້ອງໃຫ້ເຮັດຂຶ້ນໃນໄລຍະຫົກເດືອນ ນັບແຕ່ວັນເປີດການສືບທອດມູນມໍຣະດົກເປັນຕົ້ນໄປ.

ໃນກໍລະນີທີ່ຜູ້ສືບທອດມູນມໍຣະດົກຜູ້ໃດໜຶ່ງ ຫາກໄດ້ສະລະມູນມໍຣະດົກ ຜູ້ທີ່ຈະຮັບມູນມໍຣະດົກຊຶ່ງເປັນພູດຂອງຜູ້ສະລະນັ້ນ ຕ້ອງສະແດງເຈດຈຳນົງຂອງຕົນວ່າ ຈະຮັບເອົາມູນມໍຣະດົກດັ່ງກ່າວພາຍໃນໄລຍະເວລາທີ່ຍັງເຫຼືອ. ຖ້າວ່າກຳນົດເວລາທີ່ຍັງເຫຼືອນັ້ນ ຫາກຫລຸດສາມເດືອນ ຜູ້ທີ່ຈະຮັບນັ້ນມີສິດຮ້ອງຂໍຕໍ່ສານໃຫ້ຍືດເວລາອອກຕື່ມອີກກໍໄດ້ ແຕ່ບໍ່ໃຫ້ເກີນສາມເດືອນ.

ພະນັກງານທະບຽນສານ ຫລື ນາຍບ້ານ ຕ້ອງອອກໃບຢັ້ງຢືນການຮັບມູນມໍຣະດົກໃຫ້ແກ່ຜູ້ສືບທອດໄວ້ເພື່ອເປັນຫຼັກຖານ.

### ມາດຕາ 43. ມູນມໍລະດົກທີ່ບໍ່ໄດ້ຮັບເອົາພາຍໃນກຳນົດເວລາ

ມູນມໍລະດົກທີ່ຍັງຄົງເປັນວັດຖຸເດີມ ຊຶ່ງຕົກເປັນພູດຂອງຜູ້ສືບທອດມູນມໍລະດົກຜູ້ໃດໜຶ່ງ ທີ່ບໍ່ໄດ້ຮັບເອົາພາຍໃນກຳນົດເວລາຕາມທີ່ໄດ້ກຳນົດໄວ້ໃນມາດຕາ 42 ວັກທີ 3 ຂອງກົດໝາຍສະບັບນີ້ ແຕ່ມູນມໍລະດົກດັ່ງກ່າວ ພັດມີຜູ້ສືບທອດມູນມໍລະດົກຜູ້ອື່ນຮັບເອົາ ຫລື ໄດ້ມອບໃຫ້ແກ່ລັດແລ້ວ ມູນມໍລະດົກນັ້ນ ຈະຖືກສົ່ງຄືນໃຫ້ແກ່ຜູ້ສືບທອດມູນມໍລະດົກ ທີ່ບໍ່ມາຮັບເອົານັ້ນໄດ້ກໍຕໍ່ເມື່ອ ຜູ້ກ່ຽວຫາກໄດ້ຮັບຄວາມຍິນຍອມ ຈາກຜູ້ສືບທອດມູນມໍລະດົກ ຫລື ລັດ ທີ່ໄດ້ຮັບເອົາມູນມໍລະດົກເທົ່ານັ້ນ. ຖ້າຫາກບໍ່ໄດ້ຮັບຄວາມຍິນຍອມແລ້ວ ສານຈະເປັນຜູ້ຕັດສິນໃຫ້ ເມື່ອຜູ້ກ່ຽວຫາກມີເຫດຜົນພຽງພໍ.

ໃນກໍລະນີທີ່ຜູ້ສືບທອດມູນມໍລະດົກ ຕາມກົດໝາຍ ຫລື ຕາມພິໄນກຳ ໄດ້ເສຍຊີວິດ ພາຍຫລັງທີ່ໄດ້ເປີດການສືບທອດມູນມໍລະດົກແລ້ວ ແຕ່ຫາກຍັງບໍ່ທັນໄດ້ຮັບເອົາມູນມໍລະດົກທີ່ຕົກເປັນພູດຂອງຜູ້ກ່ຽວ ຕາມກຳນົດເວລາທີ່ໄດ້ກຳນົດໄວ້ໃນມາດຕາ 42 ວັກທີ 3 ຂອງກົດໝາຍສະບັບນີ້ ກໍໃຫ້ຜູ້ສືບທອດມູນມໍລະດົກຂອງຜູ້ກ່ຽວ ເປັນຜູ້ມີສິດຮັບເອົາມູນມໍລະດົກນັ້ນ.

### ມາດຕາ 44. ຂອບເຂດສິດໃນການຊື້ຂາດມູນມໍລະດົກ

ກ່ອນການເປີດການສືບທອດມູນມໍລະດົກ ຫລື ກ່ອນການຮັບໃບຢັ້ງຢືນການຮັບມູນມໍລະດົກນັ້ນ ຜູ້ປົກຄອງ ຫລື ຜູ້ສືບທອດ ທີ່ໄດ້ຄຸ້ມຄອງມູນມໍລະດົກ ຈະບໍ່ມີສິດຊື້ຂາດມູນມໍລະດົກດັ່ງກ່າວ ເວັ້ນເສຍແຕ່ໃນກໍລະນີທີ່ໄດ້ໃຊ້ຈ່າຍ ເພື່ອ:

1. ເບິ່ງແຍງ, ປິ່ນປົວ ຫລື ມ້ຽນຄາບສົ່ງສະການເຈົ້າມູນມໍລະດົກ;
2. ເບິ່ງແຍງລ້ຽງດູບຸກຄົນທີ່ຢູ່ພາຍໃຕ້ການອຸປະການະຂອງເຈົ້າມູນມໍລະດົກ;
3. ຊຳລະຄ່າແຮງງານ ແລະ ອື່ນໆທີ່ຕົກເປັນພັນທະຂອງເຈົ້າມູນມໍລະດົກ;
4. ປົກປັກຮັກສາ ແລະ ຄຸ້ມຄອງ ມູນມໍລະດົກ.

### ມາດຕາ 45(ປັບປຸງ). ການສະລະມູນມໍລະດົກ

ຜູ້ສືບທອດມູນມໍລະດົກຕາມກົດໝາຍ ຫລື ຕາມພິໄນກຳ ອາດຈະສະລະມູນມໍລະດົກ ທີ່ເປັນພູດຂອງຕົນໃຫ້ ບຸກຄົນ, ການຈັດຕັ້ງຂອງລັດ, ມູນນິທິ, ກອງທຶນໃດໜຶ່ງ. ການສະລະມູນມໍລະດົກ ແມ່ນໃຫ້ປະຕິບັດພາຍໃນກຳນົດຫົກເດືອນ ນັບແຕ່ວັນເປີດການສືບທອດມູນມໍລະດົກ ເປັນຕົ້ນໄປ.

ຜູ້ສະລະມູນມໍລະດົກຕາມກົດໝາຍ ຕ້ອງສະແດງເຈດຈຳນົງຂອງຕົນເປັນລາຍລັກອັກສອນຕໍ່ອົງການປົກຄອງບ້ານໂດຍບອກຊື່ ບຸກຄົນ ຫລື ການຈັດຕັ້ງ ທີ່ຕົນສະລະໃຫ້.

ຜູ້ສະລະມູນມໍລະດົກຕາມພິໄນກຳ ຕ້ອງສະແດງເຈດຈຳນົງຂອງຕົນເປັນລາຍລັກອັກສອນຕໍ່ສຳນັກງານທະບຽນສານ ໂດຍບອກຊື່ບຸກຄົນ ຫລື ການຈັດຕັ້ງທີ່ຕົນສະລະໃຫ້.

ໃນກໍລະນີທີ່ບໍ່ໄດ້ບອກຊື່ ບຸກຄົນ ຫລື ການຈັດຕັ້ງ ທີ່ຕົນສະລະໃຫ້ນັ້ນ ມູນມໍລະດົກດັ່ງກ່າວກໍຈະຕົກທອດເປັນຂອງຜູ້ສືບທອດ ຄົນອື່ນຕາມກົດໝາຍ.

**ມາດຕາ 46. ການສະລະມູນມໍລະດົກຂອງຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ**

ຜູ້ສືບທອດມູນມໍລະດົກທີ່ຍັງບໍ່ທັນເຖິງກະສຽນອາຍຸ ສິບແປດ ປີ ຫລື ຜູ້ເປັນບ້າເສຍຈິດ ຈະສະລະມູນມໍລະດົກບໍ່ໄດ້ ເວັ້ນເສຍແຕ່ໄດ້ຮັບຄວາມຍິນຍອມຂອງພໍ່, ແມ່ ຫລື ຜູ້ປົກຄອງເທົ່ານັ້ນ.

## ໝວດທີ 2
## ການເສຍສິດສືບທອດມູນມໍລະດົກ

**ມາດຕາ 47(ໃໝ່). ການເສຍສິດສືບທອດ**

ຜູ້ສືບທອດມູນມໍລະດົກ ຈະເສຍສິດສືບທອດ ດັ່ງນີ້:

- ກໍລະນີສໍ້ໂກງ ຫລື ຍັກຍອກມູນມໍລະດົກ;
- ກໍລະນີທີ່ໄດ້ກຳນົດໄວ້ໃນມາດຕາ 49 ແລະ 50 ຂອງກົດໝາຍສະບັບນີ້.

**ມາດຕາ 48. ການສໍ້ໂກງ, ການຍັກຍອກມູນມໍລະດົກ**

ຜູ້ສືບທອດມູນມໍລະດົກ ທີ່ໄດ້ສໍ້ໂກງ, ປິດບັງ, ຍັກຍອກມູນມໍລະດົກຫຼາຍກວ່າພູດທີ່ຕົນຄວນຈະໄດ້ຮັບ ກໍຈະບໍ່ໄດ້ຮັບມູນມໍລະດົກນັ້ນແຕ່ຢ່າງໃດ ແລະຍັງຕ້ອງສົ່ງມູນມໍລະດົກທີ່ໄດ້ເອົາໄປນັ້ນຄືນທັງໝົດ. ຖ້າວ່າການສໍ້ໂກງ, ການປິດບັງ, ການຍັກຍອກນັ້ນ ຫາກໜ້ອຍກວ່າ ຫລື ເທົ່າກັບພູດທີ່ຕົນຄວນຈະໄດ້ຮັບແລ້ວ ກໍຈະບໍ່ໄດ້ຮັບພູດທີ່ຕົນຄວນໄດ້ຮັບນັ້ນອີກ.

ມາດຕານີ້ຈະບໍ່ມີຜົນບັງຄັບໃຊ້ຕໍ່ຜູ້ສືບທອດມູນມໍລະດົກຕາມພິໄນກຳ ຊຶ່ງເຈົ້າມູນມໍລະດົກ ໄດ້ເຮັດພິໄນກຳໃຫ້ຜູ້ກ່ຽວແລ້ວ.

**ມາດຕາ 49(ປັບປຸງ). ການເສຍສິດສືບທອດມູນມໍລະດົກຂອງພໍ່ແມ່ ແລະ ລູກ**

ພໍ່ແມ່ທີ່ຖືກຕັດສິດຈາກຄວາມເປັນພໍ່ແມ່ຕາມຄຳຕັດສິນຂອງສານ ຈະບໍ່ມີສິດສືບທອດມູນມໍລະດົກຂອງລູກ, ສ່ວນລູກນັ້ນ ກໍຈະບໍ່ມີສິດສືບທອດມູນມໍລະດົກຂອງພໍ່ແມ່ເຊັ່ນດຽວກັນ ເວັ້ນເສຍແຕ່ລູກຫາກຍັງບໍ່ເຖິງກະສຽນອາຍຸ.

ໃນກໍລະນີທີ່ພໍ່ແມ່ ຫາກບໍ່ປະຕິບັດພັນທະໃນການລ້ຽງດູລູກຕາມຄຳຕັດສິນຂອງສານ ກໍຈະບໍ່ມີສິດສືບທອດມູນມໍລະດົກຂອງລູກ. ສ່ວນລູກທີ່ເຖິງກະສຽນອາຍຸ ຫາກບໍ່ປະຕິບັດພັນທະໃນການລ້ຽງດູພໍ່ແມ່ຕາມຄຳຕັດສິນຂອງສານ ກໍຈະບໍ່ມີສິດສືບທອດມູນມໍລະດົກຂອງພໍ່ແມ່ເຊັ່ນດຽວກັນ.

**ມາດຕາ 50. ຜູ້ເສຍສິດສືບທອດຕາມກົດໝາຍ ແລະ ຕາມພິໄນກຳ**

ຜູ້ເສຍສິດສືບທອດມູນມໍລະດົກຕາມກົດໝາຍ ຫລື ຕາມພິໄນກຳ ມີ ດັ່ງນີ້:

1. ຜູ້ທີ່ຖືກສານຕັດສິນວ່າ ໄດ້ມີເຈດຕະນາ ຫລື ພະຍາຍາມເຮັດໃຫ້ເຈົ້າມູນມໍຣະດົກ ຫລື ຜູ້ມີສິດສືບທອດມູນມໍຣະດົກຜູ້ໃດໜຶ່ງ ເສຍຊີວິດ ຫລື ບາດເຈັບສາຫັດ ເພື່ອຍາດຊິງເອົາມູນມໍຣະດົກ;
2. ຜູ້ທີ່ໄດ້ທຳລາຍ, ປິດບັງ ຫລື ປອມແປງພິໄນກຳທັງໝົດ ຫລື ບາງສ່ວນ;
3. ຜູ້ທີ່ຢູ່ແຂວງ ຫລື ເມືອງດຽວກັນກັບຜູ້ເສຍຊີວິດ ເມື່ອຮູ້ ຫລື ຄວນຮູ້ຂ່າວການເສຍຊີວິດແລ້ວຫາກບໍ່ມາມ້ຽນຄາບສົ່ງສະການ ຫລື ບໍ່ໄດ້ມອບໝາຍໃຫ້ຄົນອື່ນມາຮ່ວມແທນຕົນໂດຍບໍ່ມີເຫດຜົນ;
4. ຜູ້ທີ່ໄດ້ຂົ່ມຂູ່ເຈົ້າມູນມໍຣະດົກ ໃຫ້ເຮັດ, ຖອນ ຫລື ປ່ຽນແປງພິໄນກຳ ທັງໝົດ ຫລື ສ່ວນໃດສ່ວນໜຶ່ງ;
5. ຜູ້ທີ່ໄດ້ປິດບັງ ຫລື ຊຸກເຊື່ອງຜູ້ກະທຳຜິດ ຕໍ່ຊີວິດ ຫລື ສຸຂະພາບຂອງເຈົ້າມູນມໍຣະດົກ ຊຶ່ງເຮັດໃຫ້ໄດ້ຮັບບາດເຈັບສາຫັດ ຫລື ເສຍອົງຄະ;
6. ຜູ້ທີ່ຖືກສານຕັດສິນວ່າ ໄດ້ຫາຄວາມບໍ່ຈິງໃສ່ເຈົ້າມູນມໍຣະດົກ ຫລື ໃສ່ຜູ້ມີສິດສືບທອດມູນມໍຣະດົກດ້ວຍກັນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 163 ຂອງກົດໝາຍອາຍາ.

ບຸກຄົນທີ່ໄດ້ກ່າວມາເທິງນີ້ ຈະເສຍສິດສືບທອດມູນມໍຣະດົກໄດ້ ກໍຕໍ່ເມື່ອ ເຈົ້າມູນມໍຣະດົກຫາກໄດ້ສະແດງເຈດຈຳນົງຂອງຕົນອອກເປັນລາຍລັກອັກສອນເທົ່ານັ້ນ ເວັ້ນເສຍແຕ່ເຈົ້າມູນມໍຣະດົກຫາກໄດ້ເສຍຊີວິດຕາມຂໍ້ 1, 3 ແລະ 5 ຂອງມາດຕານີ້.

ຖ້າວ່າບຸກຄົນທີ່ໄດ້ກ່າວມາຂ້າງເທິງນີ້ ຫາກໄດ້ປະພຶດຕົນບໍ່ຊອບທຳ, ບໍ່ຍອມຢູ່ໃຕ້ການຄຸ້ມຄອງຂອງພໍ່ແມ່, ບໍ່ໄດ້ເບິ່ງແຍງພໍ່ແມ່ໃນເວລາເຖົ້າແກ່ ຫລື ເຈັບເປັນ ທັງໆທີ່ວ່າຕົນມີຄວາມອາດສາມາດຢູ່ແລ້ວ ກໍຈະຖືວ່າເປັນຜູ້ເສຍສິດສືບທອດມູນມໍຣະດົກ ແລະ ຈະໄດ້ປະຕິບັດດັ່ງດຽວກັນກັບວັກທີ 2 ຂອງມາດຕາ 49 ຂອງກົດໝາຍສະບັບນີ້.

**ມາດຕາ 51(ໃໝ່). ການລົບລ້າງການເສຍສິດສືບທອດ**

ເຈົ້າມູນມໍຣະດົກ ອາດຈະລົບລ້າງການເສຍສິດສືບທອດມູນມໍຣະດົກຕາມທີ່ໄດ້ກຳນົດໄວ້ໃນມາດຕາ 50 ຂອງກົດໝາຍສະບັບນີ້ ດ້ວຍການສະແດງເຈດຈຳນົງຂອງຕົນໂດຍມີຫຼັກຖານ ຫລື ພະຍານຢັ້ງຢືນ.

# ພາກທີ V
# ການຄຸ້ມຄອງມູນມໍລະດົກ
# ແລະ ຄວາມຮັບຜິດຊອບຂອງຜູ້ສືບທອດ
## ໝວດທີ 1
## ການຄຸ້ມຄອງມູນມໍລະດົກ

**ມາດຕາ 52(ປັບປຸງ). ການຄຸ້ມຄອງມູນມໍລະດົກ**

ເມື່ອມີການຮ້ອງຂໍໃຫ້ຄຸ້ມຄອງມູນມໍລະດົກ ຈາກຜູ້ສືບທອດ ຫລື ໃນກໍລະນີທີ່ຈຳເປັນ ພະນັກງານທະບຽນສານ ຫລື ນາຍບ້ານບ່ອນທີ່ເປີດການສືບທອດມູນມໍລະດົກນັ້ນ ຕ້ອງວາງມາດຕະການຄຸ້ມຄອງມູນມໍລະດົກ ຫລື ແຕ່ງຕັ້ງຜູ້ຄຸ້ມຄອງມູນມໍລະດົກ ເພື່ອຮັບປະກັນຜົນປະໂຫຍດຂອງບັນດາຜູ້ສືບທອດມູນມໍລະດົກ ແລະ ເຈົ້າໜີ້.

**ມາດຕາ 53(ປັບປຸງ). ບຸກຄົນທີ່ບໍ່ມີສິດເປັນຜູ້ຄຸ້ມຄອງມູນມໍລະດົກ**

ບຸກຄົນທີ່ບໍ່ມີສິດເປັນຜູ້ຄຸ້ມຄອງມູນມໍລະດົກ ມີ ດັ່ງນີ້:

1. ຜູ້ທີ່ຍັງບໍ່ທັນເຖິງກະສຽນອາຍຸ ສິບແປດປີ;
2. ຜູ້ທີ່ເປັນບ້າເສຍຈິດ;
3. ຜູ້ທີ່ຖືກສານຕັດສິນວ່າ ເປັນຜູ້ລົ້ມລະລາຍທີ່ຢູ່ໃນໄລຍະຫ້າມ;
4. ຜູ້ທີ່ຖືກສານຕັດສິນປົດສິດໃນການເປັນພໍ່ແມ່ ແລະ ຜູ້ເສຍສິດສືບທອດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 49 ແລະ 50 ຂອງກົດໝາຍສະບັບນີ້.

**ມາດຕາ 54. ສິດ ແລະ ໜ້າທີ່ ຂອງຜູ້ຄຸ້ມຄອງມູນມໍລະດົກ**

ຜູ້ຄຸ້ມຄອງມູນມໍລະດົກມີສິດ ແລະໜ້າທີ່ ດັ່ງນີ້:

1. ເຮັດບັນຊີມູນມໍລະດົກ ໂດຍຊ້ອງໜ້າຜູ້ສືບທອດມູນມໍລະດົກທຸກຄົນ. ໃນກໍລະນີທີ່ມີຜູ້ສືບທອດມູນມໍລະດົກຜູ້ໃດໜຶ່ງບໍ່ສາມາດມາຮ່ວມໄດ້ ກໍຕ້ອງແຈ້ງໃຫ້ຜູ້ຄຸ້ມຄອງມູນມໍລະດົກຊາບ, ການເຮັດບັນຊີມູນມໍລະດົກໂດຍຊ້ອງໜ້າຜູ້ສືບທອດມູນມໍລະດົກນັ້ນຢ່າງໜ້ອຍແມ່ນບໍ່ໃຫ້ຫລຸດສອງສ່ວນ ສາມຂອງຈຳນວນຜູ້ສືບທອດມູນມໍລະດົກທັງໝົດ ໂດຍເຮັດໃຫ້ແລ້ວພາຍໃນກຳນົດໜຶ່ງເດືອນ ນັບແຕ່ວັນທີ່ຜູ້ຄຸ້ມຄອງໄດ້ຮັບການແຕ່ງຕັ້ງເປັນຕົ້ນໄປ;
2. ຮັບຄຳຮ້ອງຂອງເຈົ້າໜີ້ ແລະຊຳລະໜີ້ສິນຂອງເຈົ້າມູນມໍລະດົກກ່ອນຜູ້ສືບທອດຈະຮັບເອົາມູນມໍລະດົກ;
3. ແບ່ງປັນມູນມໍລະດົກໃຫ້ບັນດາຜູ້ສືບທອດຕາມພູດຂອງແຕ່ລະຄົນ.

ຜູ້ຄຸ້ມຄອງມູນມໍລະດົກ ບໍ່ມີສິດທວງເອົາບຳເນັດໃນການຄຸ້ມຄອງມູນມໍລະດົກ ເວັ້ນເສຍແຕ່ຜູ້ສືບທອດຫາກເຫັນດີມອບໃຫ້ເທົ່ານັ້ນ.

**ມາດຕາ 55. ການລຶບລ້າງການແຕ່ງຕັ້ງຜູ້ຄຸ້ມຄອງມູນມໍລະດົກ**

ຖ້າວ່າຜູ້ຄຸ້ມຄອງມູນມໍລະດົກ ຫາກບໍ່ໄດ້ປະຕິບັດຕາມສິດ ແລະ ໜ້າທີ່ຂອງຕົນ ຫລື ໄດ້ປະຕິບັດດ້ວຍຄວາມບໍ່ເອົາໃຈໃສ່ ຫລື ໂດຍບໍ່ມີຄວາມບໍລິສຸດໃຈແລ້ວ ພະນັກງານທະບຽນສານ ຫລື ນາຍບ້ານທີ່ກ່ຽວຂ້ອງ ມີສິດລຶບລ້າງການແຕ່ງຕັ້ງຜູ້ຄຸ້ມຄອງມູນມໍລະດົກດັ່ງກ່າວ ແລ້ວແຕ່ງຕັ້ງຜູ້ຄຸ້ມຄອງຜູ້ໃໝ່ແທນ ພາຍໃນກຳນົດເວລາເຈັດວັນ ນັບແຕ່ວັນທີ່ໄດ້ລຶບລ້າງການແຕ່ງຕັ້ງນັ້ນເປັນຕົ້ນໄປ.

## ໝວດທີ 2
## ຄວາມຮັບຜິດຊອບຂອງຜູ້ສືບທອດມູນມໍລະດົກ

**ມາດຕາ 56. ການຊຳລະໜີ້ສິນ**

ຜູ້ສືບທອດມູນມໍລະດົກຕາມກົດໝາຍ ຫລື ຕາມພິໄນກຳ ຕ້ອງຮັບຜິດຊອບຊຳລະໜີ້ສິນຂອງເຈົ້າມູນມໍລະດົກບໍ່ໃຫ້ເກີນພູດມູນມໍລະດົກທີ່ຕົນໄດ້ຮັບ.

ຖ້າວ່າມູນມໍລະດົກ ຫາກຍັງບໍ່ທັນໄດ້ແບ່ງປັນ ເຈົ້າໜີ້ກໍມີສິດສະເໜີໃຫ້ຜູ້ສືບທອດມູນມໍລະດົກ ຫລື ຜູ້ຄຸ້ມຄອງມູນມໍລະດົກນັ້ນ ຊຳລະໜີ້ສິນໃຫ້ຕົນທັງໝົດ.

ຖ້າວ່າມູນມໍລະດົກຫາກໄດ້ແບ່ງປັນກັນໝົດແລ້ວ ເຈົ້າໜີ້ອາດຈະສະເໜີໃຫ້ຜູ້ສືບທອດ ມູນມໍລະດົກຜູ້ໃດໜຶ່ງ ຊຳລະໜີ້ສິນໃຫ້ຕົນກໍໄດ້. ໃນກໍລະນີທີ່ຜູ້ສືບທອດມູນມໍລະດົກຜູ້ໃດໜຶ່ງ ຫາກໄດ້ຊຳລະໜີ້ສິນໃຫ້ແກ່ເຈົ້າໜີ້ເກີນກວ່າສ່ວນທີ່ຕົນຈະຕ້ອງຊຳລະແລ້ວ ຜູ້ສືບທອດຜູ້ອື່ນໆ ກໍຕ້ອງສະເລ່ຍການທົດແທນຄ່າຊຳລະໜີ້ສິນນັ້ນຄືນໃຫ້ຜູ້ກ່ຽວ.

ຖ້າວ່າຜູ້ສືບທອດມູນມໍລະດົກຜູ້ໃດໜຶ່ງ ຫາກຕົກຢູ່ໃນສະພາບທີ່ບໍ່ສາມາດຊຳລະໜີ້ສິນຕາມພູດຂອງຕົນໄດ້ນັ້ນ ຜູ້ສືບທອດຜູ້ອື່ນໆ ຕ້ອງຮັບຜິດຊອບສະເລ່ຍໃຊ້ໜີ້ສິນແທນຜູ້ກ່ຽວໃຫ້ເຈົ້າໜີ້.

ການຊຳລະໜີ້ສິນຂອງເຈົ້າມູນມໍລະດົກ ໃຫ້ຄິດໄລ່ເອົາແຕ່ໃນຊັບສົມບັດທີ່ເປັນມູນມໍລະດົກເທົ່ານັ້ນ.

**ມາດຕາ 57. ກຳນົດເວລາໃນການທວງໜີ້ສິນ**

ເຈົ້າໜີ້ມີສິດທວງເອົາໜີ້ສິນຂອງຕົນນຳຜູ້ສືບທອດທີ່ໄດ້ຮັບເອົາມູນມໍລະດົກ ຫລື ນຳຜູ້ຄຸ້ມຄອງມູນມໍລະດົກ ຫລື ຜູ້ປະຕິບັດພິໄນກຳ ຫລື ຍື່ນຄຳຮ້ອງເພື່ອທວງເອົາໜີ້ສິນຕໍ່ສຳນັກງານທະບຽນສານ ຫລື ນາຍບ້ານ ບ່ອນທີ່ເປີດການສືບທອດມູນມໍລະດົກ ຫລື ຕໍ່ສານພາຍໃນກຳນົດ ສາມປີ ນັບແຕ່ວັນທີ່ໄດ້ເປີດການສືບທອດມູນມໍລະດົກເປັນຕົ້ນໄປ.

ຖ້າວ່າເຈົ້າໜີ້ຫາກບໍ່ໄດ້ທວງເອົາໜີ້ສິນ ຫລື ບໍ່ໄດ້ຍື່ນຄຳຮ້ອງທວງເອົາໜີ້ສິນຂອງຕົນພາຍໃນກຳນົດ ສາມປີແລ້ວ ເຈົ້າໜີ້ ກໍຈະໝົດສິດໄປ ເວັ້ນເສຍແຕ່ຜູ້ກ່ຽວຫາກມີເຫດຜົນພຽງພໍເທົ່ານັ້ນ.

**ມາດຕາ 58. ການແບ່ງປັນມູນມໍລະດົກທີ່ບໍ່ສາມາດຕົກລົງກັນໄດ້**

ຖ້າວ່າການແບ່ງປັນມູນມໍລະດົກຫາກບໍ່ສາມາດຕົກລົງກັນໄດ້ ລະຫວ່າງບັນດາຜູ້ສືບທອດມູນມໍລະດົກດ້ວຍກັນແລ້ວ ກໍແມ່ນສານ ຈະເປັນຜູ້ຕົກລົງ ຖ້າຫາກມີການຮ້ອງຟ້ອງ.

# ພາກທີ VI (ເພີ່ມໃໝ່)
# ຂໍ້ຫ້າມ

**ມາດຕາ 59. ຂໍ້ຫ້າມສໍາລັບຜູ້ສືບທອດ**

ຫ້າມຜູ້ສືບທອດມູນມໍລະດົກ ມີການກະທໍາ ດັ່ງນີ້:

- ນໍາໃຊ້ມູນມໍລະດົກເພື່ອຜົນປະໂຫຍດຂອງຕົນເອງ ໃນກໍລະນີມູນມໍລະດົກຍັງບໍ່ທັນໄດ້ຮັບການແບ່ງປັນ ເວັ້ນເສຍແຕ່ໄດ້ຮັບຄວາມເຫັນດີຈາກຜູ້ສືບທອດຄົນອື່ນ;
- ສໍ້ໂກງ, ຍັກຍອກ, ທໍາລາຍ, ເຊື່ອງອໍາມູນມໍລະດົກທີ່ຍັງບໍ່ໄດ້ຮັບການແບ່ງປັນ;
- ນາບຂູ່, ໃຊ້ຄວາມຮຸນແຮງ, ຊື້ຈ້າງຜູ້ຄຸ້ມຄອງມູນມໍລະດົກ, ນາຍບ້ານ, ພະນັກງານທະບຽນສານ ກ່ຽວກັບການສືບທອດມູນມໍລະດົກ;
- ນາບຂູ່, ໃຊ້ຄວາມຮຸນແຮງ ຕໍ່ເຈົ້າມູນມໍລະດົກ ຫລື ຕໍ່ຜູ້ສືບທອດມູນມໍລະດົກດ້ວຍກັນ ກ່ຽວກັບການສືບທອດມູນມໍລະດົກ;
- ຈອບອອຍເຈົ້າມູນມໍລະດົກ ໃຫ້ເຮັດພິໄນກໍາ, ມອບຊັບ ຫລື ຍົກຊັບໃຫ້ຕົນ.

**ມາດຕາ 60. ຂໍ້ຫ້າມສໍາລັບຜູ້ຄຸ້ມຄອງມູນມໍລະດົກ**

ຫ້າມຜູ້ຄຸ້ມຄອງມູນມໍລະດົກ ມີການກະທໍາ ດັ່ງນີ້:

- ເຮັດບັນຊີມູນມໍລະດົກໂດຍບໍ່ຊ້ອງໜ້າຜູ້ສືບທອດມູນມໍລະດົກ;
- ປະຕິເສດຮັບຄໍາຮ້ອງຂອງເຈົ້າໜີ້ ແລະຊໍາລະໜີ້ສິນຂອງເຈົ້າມູນມໍລະດົກ;
- ທວງເອົາບໍາເນັດ ໃນການຄຸ້ມຄອງມູນມໍລະດົກ ເວັ້ນເສຍແຕ່ຜູ້ສືບທອດຫາກເຫັນດີມອບໃຫ້;
- ສໍ້ໂກງ, ຍັກຍອກ, ທໍາລາຍມູນມໍລະດົກທີ່ຕົນຄຸ້ມຄອງ;
- ນາບຂູ່,ໃຊ້ຄວາມຮຸນແຮງຕໍ່ຜູ້ສືບທອດມູນມໍລະດົກ;
- ນໍາໃຊ້ມູນມໍລະດົກເພື່ອຜົນປະໂຫຍດສ່ວນຕົວ;
- ແກ່ຍາວ, ກີດໜ່ວງການມອບມູນມໍລະດົກໃຫ້ແກ່ຜູ້ສືບທອດມູນມໍລະດົກ.

**ມາດຕາ 61. ຂໍ້ຫ້າມສໍາລັບຜູ້ປະຕິບັດພິໄນກໍາ**

ຫ້າມຜູ້ປະຕິບັດພິໄນກໍາ ມີການກະທໍາ ດັ່ງນີ້:

- ປະຕິບັດພິໄນກໍານອກເຈດຈໍານົງຂອງເຈົ້າມູນມໍລະດົກ;
- ສໍ້ໂກງ, ຍັກຍອກ, ນໍາໃຊ້ ມູນມໍລະດົກ;

- ແກ່ຍາວ, ກີດໜ່ວງໃນການມອບມູນມໍລະດົກ ໃຫ້ແກ່ຜູ້ສືບທອດມູນມໍລະດົກ.

**ມາດຕາ 62. ຂໍ້ຫ້າມສຳລັບນາຍບ້ານ, ພະນັກງານ ຫລື ບຸກຄົນທີ່ກ່ຽວຂ້ອງ**

ຫ້າມນາຍບ້ານ, ພະນັກງານ ຫລື ບຸກຄົນທີ່ກ່ຽວຂ້ອງ ມີການກະທຳ ດັ່ງນີ້:

- ເປີດພິໄນກຳໂດຍທີ່ເຈົ້າມູນມໍລະດົກຍັງມີຊີວິດຢູ່ ຫລື ເປີດພິໄນກຳໂດຍບໍ່ຊ້ອງໜ້າຜູ້ສືບທອດມູນມໍລະດົກ;
- ຂີດຂ້າ, ເພີ່ມເຕີມ, ປອມແປງ ຫລື ທຳລາຍພິໄນກຳ;
- ເຂົ້າຂ້າງ ອອກຂາຜູ້ສືບທອດໃນການແບ່ງປັນມູນມໍລະດົກ ;
- ຢັ້ງຢືນບໍ່ຖືກຕ້ອງ ຫລື ໃຫ້ການເທັດ ກ່ຽວກັບການສືບທອດມູນມໍລະດົກ ;
- ແກ່ຍາວ, ກີດໜ່ວງການຂຶ້ນທະບຽນກຳມະສິດຂອງຜູ້ສືບທອດທີ່ໄດ້ຮັບມູນມໍລະດົກ.

**ມາດຕາ 63. ຂໍ້ຫ້າມສຳລັບພະນັກງານທະບຽນສານ**

ຫ້າມພະນັກງານທະບຽນສານ ມີການກະທຳ ດັ່ງນີ້:

- ລັກເບິ່ງ ຫລື ເປີດເຜີຍ ເນື້ອໃນຂອງພິໄນກຳ ໂດຍທີ່ເຈົ້າມູນມໍລະດົກຍັງມີຊີວິດຢູ່ ຫລື ເປີດພິໄນກຳໂດຍບໍ່ຊ້ອງໜ້າຜູ້ສືບທອດມູນມໍລະດົກ;
- ຂີດຂ້າ, ເພີ່ມເຕີມ, ປອມແປງ ຫລື ທຳລາຍພິໄນກຳ;
- ເຂົ້າຂ້າງ ອອກຂາຜູ້ສືບທອດໃນການແບ່ງປັນມູນມໍລະດົກ;
- ຢັ້ງຢືນບໍ່ຖືກຕ້ອງ ຫລື ໃຫ້ການເທັດ ກ່ຽວກັບການສືບທອດມູນມໍລະດົກ;
- ແກ່ຍາວ, ກີດໜ່ວງການຢັ້ງຢືນຄວາມຖືກຕ້ອງຂອງເອກະສານກ່ຽວກັບມູນມໍລະດົກ.

# ພາກທີ VII (ໃໝ່)
# ນະໂຍບາຍຕໍ່ຜູ້ມີຜົນງານ ແລະມາດຕະການຕໍ່ຜູ້ລະເມີດ

**ມາດຕາ 64(ໃໝ່). ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ ຫລື ການຈັດຕັ້ງທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫລື ນະໂຍບາຍອື່ນຕາມຄວາມເໝາະສົມ.

**ມາດຕາ 65(ໃໝ່). ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ ຫລື ການຈັດຕັ້ງທີ່ໄດ້ລະເມີດກົດໝາຍສະບັບນີ້ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ປະຕິບັດວິໄນ, ປັບໃໝ, ມາດຕະການທາງແພ່ງ ຫລື ລົງໂທດທາງອາຍາ ແລ້ວແຕ່ກໍລະນີເບົາ ຫລື ໜັກ.

# ພາກທີ VIII (ໃໝ່)
# ບົດບັນຍັດສຸດທ້າຍ

**ມາດຕາ 66(ໃໝ່). ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງສາທາລະນາລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 67(ໃໝ່). ຜົນສັກສິດ**

ກົດໝາຍສະບັບນີ້ມີຜົນສັກສິດນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.

ສຳລັບບັນດາມາດຕາປັບປຸງ ແລະເພີ່ມເຂົ້າໃໝ່ ແມ່ນ ມີຜົນສັກສິດພາຍຫຼັງ ຫົກສິບວັນນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**

ສະພາແຫ່ງຊາດ

ປະທານ

ທອງສິງ ທຳມະວົງ